ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ: 0395/ອຄ

ນະຄອນຫຼວງວຽງຈັນ, ວັນທີ 25 FEB 2011

## ຄຳສັ່ງແນະນຳ

## ກ່ຽວກັບການລົບລ້າງສິ່ງກີດຂວາງທີ່ເປັນອຸປະສັກຕໍ່ການຈໍລະຈອນສິນຄ້າ

ເຖິງ:

- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານໃນຂອບເຂດທົ່ວປະເທດ

- ອີງຕາມ ມະຕິຕົກລົງຂອງລັດຖະບານແຫ່ງ ສປປ ລາວ ກ່ຽວກັບຜົນຂອງກອງປະຊຸມຮ່ວມ ລະຫວ່າງລັດຖະບານກັບເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງໃນທົ່ວປະເທດ;
- ອີງຕາມດຳລັດ, ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການສ້າງຕັ້ງ ແລະ ການ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ເພື່ອເຮັດໃຫ້ການຈໍລະຈອນສິນຄ້າ ເປັນໄປຢ່າງຄ່ອງຕົວເສລີ ຖືກກົດໝາຍ ຕາມແນວທາງນະໂຍບາຍຂອງພັກ-ລັດສົ່ງເສີມການຜະລິດເປັນສິນຄ້າສ້າງງານ, ສ້າງລາຍໄດ້, ແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນຢ່າງແທ້ຈິງ ເຮັດໃຫ້ການພັດທະນາເສດຖະກິດຂອງຊາດ ຈະເລີນເຕີບໂຕ ແລະ ມີຄວາມເຂັ້ມແຂງຂຶ້ນເລື້ອຍໆ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງແນະນຳ:**

1. ໃຫ້ຖອນພະນັກງານລັດຖະກອນຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານທັງໝົດອອກຈາກດ່ານ ຫຼື ປ້ອມ ຫຼື ຈຸດກວດກາສິນຄ້າທຸກຮູບແບບ ເວັ້ນເສຍແຕ່ບ່ອນທີ່ລະບຽບກົດໝາຍ ຫຼື ລັດຖະບານ ຫຼື ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງສະເພາະໃຫ້ປະຕິບັດເປັນຢ່າງອື່ນ;
2. ຍົກເລີກການຕັ້ງດ່ານ ຫຼື ປ້ອມ ຫຼື ຈຸດກວດກາສິນຄ້າທຸກຮູບແບບທີ່ມີລັກສະນະປະຈຳ;
3. (ໃນໄລຍະລໍຖ້າການປະກາດໃຊ້ ດຳລັດວ່າດ້ວຍການກວດກາການຄ້າ) ໃຫ້ເອົາໃຈໃສ່ຈັດຕັ້ງການກວດກາສິນຄ້າແບບສະເພາະບົນພື້ນຖານແຫຼ່ງຂ່າວທີ່ໜ້າເຊື່ອຖືໄດ້ (ຕາມເບາະແສ) ໃຫ້ມີປະສິດທິພາບສູງ ເພື່ອກວດກາການຈໍລະຈອນສິນຄ້າພາຍໃນ ທີ່ມີການລະເມີດລະບຽບກົດໝາຍ ໂດຍສະເພາະລະບຽບກົດໝາຍ ຂອງຂະ

ແໜງອຸດສາຫະກຳ ແລະ ການຄ້າ, ການກວດກາແບບສະເພາະນີ້ ເຈົ້າໜ້າທີ່ກວດກາການຄ້າສາມາດຢຸດກວດ ກາຜູ້ຕ້ອງສົງໄສທີ່ມີແຫຼ່ງຂ່າວການລະເມີດທີ່ໜ້າເຊື່ອຖືໄດ້ ໄດ້ທຸກບ່ອນທຸກຈຸດ ແລະ ທຸກເວລາ;

4. ຫ້າມບໍ່ໃຫ້ເກັບຄ່າກວດກາໃດໆທັງສິ້ນ ທີ່ກ່ຽວຂ້ອງກັບການດຳເນີນການກວດກາແບບສະເພາະດັ່ງກ່າວ. ໃນກໍລະນີທີ່ກວດພົບເຫັນການລະເມີດລະບຽບກົດໝາຍ ຫຼື ມີຄ່າທີ່ຕ້ອງເກັບຕາມລະບຽບກົດໝາຍ ເຊັ່ນຄ່າປັບໃໝ ແລະ ອື່ນໆ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງທຸກປະການ;
5. ລົບລ້າງການອອກໃບອະນຸຍາດເຄື່ອນຍ້າຍສິນຄ້າ ແລະ ໃບຕິດຕາມ ຫຼື ໃບຢັ້ງຢືນ ຫຼື ໃບອະນຸຍາດນຳເຂົ້າ-ສົ່ງອອກທຸກຮູບແບບ ເວັ້ນເສັຍແຕ່ບາງປະເພດສິນຄ້າທີ່ມີຄວາມຈຳເປັນ ຕາມຂໍ້ 6 ລຸ່ມນີ້;
6. ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ຕ້ອງໄດ້ອອກໃບອະນຸຍາດເຄື່ອນຍ້າຍສິນຄ້າ ແລະ ໃບຕິດຕາມ ຫຼື ໃບຢັ້ງຢືນ ຫຼື ໃບອະນຸຍາດນຳເຂົ້າ-ສົ່ງອອກ ຕໍ່ປະເພດສິນຄ້າໃດໜຶ່ງ ຕ້ອງໄດ້ສະເໜີຂໍອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາຕົກລົງອະນຸມັດສາກ່ອນ;
7. ມອບໃຫ້ກົມການຄ້າພາຍໃນ (ກ່ຽວກັບໃບອະນຸຍາດເຄື່ອນຍ້າຍສິນຄ້າ), ກົມນຳເຂົ້າ-ສົ່ງອອກ (ກ່ຽວກັບໃບຕິດຕາມ ຫຼື ໃບຢັ້ງຢືນ ຫຼື ໃບອະນຸຍາດນຳເຂົ້າ-ສົ່ງອອກ) ປະສານກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຫຼື ຂະແໜງການທີ່ກ່ຽວຂ້ອງ ປຶກສາຫາລືລາຍລະອຽດກ່ຽວກັບປະເພດສິນຄ້າ ທີ່ຈຳເປັນຕ້ອງອອກເອກະສານດັ່ງກ່າວ ວ່າມີອັນໃດແດ່ ຮູບແບບການອອກ ແລະ ຄ່າເກັບທີ່ເປັນເອກະພາບງ່າຍດາຍ ແລະ ສົມເຫດສົມຜົນ ເພື່ອສະເໜີກະຊວງພິຈາລະນາຕົກລົງ;
8. ມອບໃຫ້ບັນດາກົມທີ່ກ່ຽວຂ້ອງຂອງກະຊວງ ປະສານກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ກວດກາຄືນບັນດານິຕິກຳ ແລະ ມາດຕະການ ການຈັດຕັ້ງປະຕິບັດທີ່ຂະແໜງການອຸດສາຫະກຳ ແລະ ການຄ້າວາງອອກໃນໄລຍະຜ່ານມາ ທີ່ເຫັນວ່າເປັນອຸປະສັກຕໍ່ການຈໍລະຈອນສິນຄ້າ ຫຼື ຂັດກັບຄຳສັ່ງແນະນຳສະບັບນີ້ ເພື່ອສະເໜີກະຊວງ ພິຈາລະນາລົບລ້າງ ຫຼື ອອກນິຕິກຳໃໝ່ປ່ຽນແທນ ດັດແປງ ຫຼື ເພີ່ມເຕີມ;
9. ບັນດາກົມ, ຫ້ອງການ, ສະຖາບັນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ໃຫ້ປະກົດຜົນເປັນຈິງ;
10. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ.